# ບົດທີ 14

# ພະເຈົ້າຊົງບັນດົນໃຈຜູ້ຂຽນພະຄຳພີ

## ພາກກາງ: ຄຳທຳນວາຍທີ່ສຳເລັດ

ເປົ້າຫມາຍໃນບົດນີ້ ຄືຈະສະແດງວ່າ ຄຳທຳນວາຍໃນ ພະຄຳພີເດີມ ສຳເລັດ ໃນພະຄຳພີໃໝ່ ເຮົາຈະຍົກສະເຫນີຄຳທຳນວາຍ 8 ປະການດັ່ງຕໍ່ໄປນີ້. ໃນບົດຮຽນນີ້ ທ່ານຈະໃຊ້ສໍສີແດງ ເພື່ອຫມາຍຂໍ້ທີ່ວ່າ ໃນພະຄຳພີໃຫມ່ ດ້ວຍ ລາຊະອານາຈັກຂອງພະເຈົ້າ. ສີແດງນັ້ນ ຫມາຍວ່າ ພະເຢຊູເປັນກະສັດເຫນືອກະສັດທຸກອົງ.




**ພະຄຳພີເດີມ ສຳເລັດໃນ ພະຄຳພີໃໝ່**

**1** ໃນພະຄຳພີເດີມເຮົາເຫັນຄຳທຳນວາຍຫຼາຍປະການທີ່ວ່າດ້ວຍການສະເດັດມາຂອງພະອົງ. ໃນພະຄຳພີໃຫມ່ໄດ້ເຫັນ ການສຳເລັດຂອງຄຳທຳນວາຍເຫຼົ່ານັ້ນໃນເມື່ອພະເຢຊູສະເດັດມາ ການນີ້ສະແດງວ່າພະຄຳພີແຕ່ກົກໄປເຖິງປາຍ ເວົ້າເຖິງເລື່ອງດຽວກັນຫມົດ ຄືເລື່ອງໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ເລື່ອງພະເມຊີອາມາ

ຂ. ເລື່ອງກະສັດເຮໂລດ

ຄ. ເລື່ອງອານາຈັກອິດສະລາແອນ

ງ. ເລື່ອງຢູດາອິດສະກາລີອົດ

**2** ກ. ຄຳທຳນວາຍເລື່ອງພະເມຊີອາຈະສະເດັດມາເຫັນໃນພະຄຳພີໃຫມ່ ຫຼືພະຄຳພີເດີມ?

____________________________________________________

ຂ. ທີ່ຄຳທຳນວາຍເຫຼົ່ານັ້ນສຳເລັດ ເຫັນຢູ່ພະຄຳພີໃດ? ________________________

> ຝຶກ: ໃຫ້ທ່ານເອົາສໍສີແດງຂຽນຄຳ "ສຳເລັດ" ໃສ່ໃນພະຄຳພີ 5 ຂໍ້ຕໍ່ໄປນີ້:
>
> ມທ 1:23 ມທ 3:3
>
> ມທ 2:6 ມທ 4:15-16
>
> ມທ 2:18
>
> ຄຳວ່າ "ສຳເລັດ" ຂຽນດ້ວຍສໍສີແດງ ຫມາຍຄວາມວ່າຄຳທຳນວາຍເລື່ອງການສະເດັດມາ ຂອງພະເມຊີອາໄດ້ສຳເລັດ.

**3** ທ່ານຈື່ເລື່ອງທີ່ຮຽນຈາກ ມັດທາຍ ເຫຼັ້ມທີ I ບໍ? ໃນ ເອຊາຢາ 7:14 ມີຄຳທີ່ວ່າ: "ຍິງສາວຜູ້ນຶ່ງຈະຖືພາ ແລະອອກລູກມາເປັນຊາຍ" ໃນຄຳແປໃຫມ່ ເປັນຄຳແປຢູ່ໃນສະຫວັນນະເຂດ, ແປໄປດັ່ງນີ້ຄື: "ຜູ້ສາວປອດຈະທົງຄັບແລະປະສູດລູກຊາຍຜູ້ຫນຶ່ງ" ສ່ວນຂໍ້ພະຄຳພີ 5 ຂໍ້ທີ່ທ່ານເຫັນໃນສ່ວນ "ຝຶກ" ນັ້ນ ແມ່ນຂໍ້ ໃດທີ່ສຳເລັດຕາມທີ່ ເອຊາຢາ 7:14 ກ່າວໄວ້? ________

*ທ່ານຢ່າລືມຂີດກ້ອງຄວາມທຳນວາຍທຸກປະການທີ່ວ່າດ້ວຍ ການສະເດັດມາຂອງພະເມຊີອາ. ການຮຽນຕໍ່ໄປໃນອະນາຄົດຈະຂຶ້ນຢູ່ກັບການຢ່າງນັ້ນ.*

> ຝຶກ: 1. ຈົ່ງເອົາສີແດງຂີດກ້ອງ ເອຊາຢາ 7:14
>
> 2. ຈົ່ງເອົາສໍສີແດງຂີດກ້ອງ ມີກາ 5:2

ຕອບ:

**1** *ກ. ຖືກ*

**2** *ກ. ພະຄຳພີເດີມ ຂ. ເຫັນໃນພະຄຳພີໃຫມ່*

**3** *ມທ 1:23*

**4** ກ. ຄວາມທຳນວາຍໃນ ມີກາ 5:2 ວ່າດ້ວຍບ້ານທີ່ພະອົງຈະເກີດຄືບ້ານໃດ? ___________
ຂ. ຄຳທຳນວາຍນັ້ນສຳເລັດໃນ ມັດທາຍຂໍ້ໃດ? ________________________________
(ທີ່ທ່ານເຄີຍຂຽນຄຳ "ສຳເລັດ")

| |
|---|
| ຝຶກ: ຈົ່ງເອົາສໍສີແດງຂີດກ້ອງ ເອຊາຢາ 40:3 |

**5** ເອຊາຢາ 40:3 ເວົ້າເຖິງຜູ້ຮັບໃຊ້ໄປລ່ວງໜ້າພະອົງ.
ກ. ເພິ່ນຈະປະກາດໃນບ່ອນໃດ? __________________________________________
ຂ. ຄວາມທຳນວາຍນີ້ສຳເລັດດ້ວຍຜູ້ໃດ? ____________________________________
ຄ. ໃນພະຄຳພີ ມທ 3:3-5 ຂໍ້ໃດເປັນທີ່ສຳເລັດຈາກຄຳທຳນວາຍນັ້ນ? ______________

**6** ໃນບົດເລີ້ມຕົ້ນຂອງມັດທາຍ ເຫຼັ້ມ II ນີ້ ເຮົາໄດ້ສຶກສາເລື່ອງວິທີຮຽນຂ່າວປະເສີດ 3 ເຫຼັ້ມ ແລກ. ການຮຽນແບບນີ້ແມ່ນວິທີໃດ? ______________________________________

**7** ເຮົາໄດ້ຫຼັກຖານປະການໜຶ່ງວ່າ ພະຄຳພີເປັນທີ່ບັນດົນຈາກພະເຈົ້າ ເພາະຄຳທຳນວາຍຫຼາຍປະການທີ່ສຳເລັດ. ໃນ ນັ້ນເຮົາໄດ້ຮຽນມາດ້ວຍວິທີປຽບທຽບ ເປັນຕົ້ນຄຳທຳນວາຍເລື່ອງການສະເດັດມາຂອງພະເມ _________ ໃນ ພະຄຳພີເດີມ
ທີ່ໄດ້ສຳເລັດ ໃນ ພະຄຳ _________________. (ຈົ່ງຕື່ມຄວາມທີ່ຂາດ)

**8** ໃຫ້ເປີດພະຄຳພີໃນ ມທ 4:12-16 ທີ່ເວົ້າກ່ຽວກັບພະອົງເລີ້ມຕົ້ນປ່າວປະກາດໃນແຂວງຄາລີເລ. ຂໍ້ພະຄຳພີເຫຼົ່າ ນັ້ນຂຶ້ນກັບສະໄໝປີໃດໃນຊີວິດຂອງພະອົງ? ______________

**9** ກ. ອ່ານ ມທ 4:15. ຫຼາຍຮ້ອຍປີກ່ອນພະເຢຊູຈະເກີດມາ ມີຜູ້ທຳນວາຍບອກວ່າ ພະເຢຊູຈະປະກາດໃນແຂວງ ຊາບູໂລນ ແຂວງເນັບທາລີ ແລະແຂວງໃດອີກ? ______________
ຂ. ອ່ານ ມທ 4:14 ຜູ້ທຳນວາຍນັ້ນແມ່ນໃຜ? ________________________________

ຕອບ:

**4** *ກ. ເບດເລເຮັມ ຂ. ມທ 2:6*

**5** *ກ. ໃນທະເລຊາຍ (ປ່າ) ຂ. ໂຢຮັນບັບຕິສະໂຕ ຄ. ມທ 3:3*

**6** *ປຽບທຽບ*

**7** *ພະເມຊີອາ ພະຄຳພີໃໝ່*

**8** *ສະໄໝປີທີ່ພະອົງມີຊື່ສຽງດີ*

**9** *ກ. ຄາລີເລ ຂ. ເອຊາຢາ*

**10** ຂໍ້ 15 ແລະ 16 ເປັນຄຳກ່າວອ້າງຈາກເອຊາຢາ ທ່ານຈິ່ງສັງເກດວ່າ ມີເຄື່ອງຫມາຍວົງຢືມ ເຊັ່ນ: "…" ແລະ ອີກຢ່າງຫນຶ່ງກ່ອນຈະພິມເຂົາຫຍໍ້ຫນ້າເຂົ້າຫຼາຍກວ່າປົກກະຕິຕະຫຼອດສອງຂໍ້ນັ້ນ. ເຄື່ອງຫມາຍ "…" ນີ້ມີຄວາມ ຫມາຍວ່າເປັນຄຳອັນໃດ? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ເປັນຄຳເຊື້ອມ

ຂ. ເປັນຄວາມສຳຄັນ

ຄ. ເປັນຄຳກ່າວອ້າງ ຫຼື ຢືມຄຳເວົ້າຂອງຜູ້ອື່ນ

**11** ສ່ວນຫຼາຍຄຳກ່າວອ້າງຈາກພະຄຳພີ ເຄີຍພິມເອົາຢ່າງນັ້ນຄື ຫຍໍ້ຫນ້າເຂົ້າແລະໃຊ້ວົງຢືມດ້ວຍ. ໃຫ້ທ່ານກວດເບິ່ງ ມັດທາຍ ບົດ 2 ແລະ 3 ມີຂໍ້ໃດແດ່ ທີ່ກ່າວອ້າງຈາກຜູ້ທຳນວາຍໃນພະຄຳພີເດີມ? ________________ ________________ ________________

**12** ຢ່າງນັ້ນເຮົາສັງເກດໄດ້ງ່າຍວ່າ ແມ່ນຂໍ້ໃດທີ່ກ່າວອ້າງຈາກພະຄຳພີເດີມ. ໃນຂ່າວປະເສີດມັດທາຍ ຂໍ້ພະຄຳພີສ່ວນ ຫຼາຍທີ່ຍົກມາຈາກພະຄຳພີເດີມ ເປັນຄຳທຳນວາຍທີ່ສຳເລັດແລ້ວ. ຜູ້ພິມພະຄຳພີເຮັດຢ່າງໃດຈຶ່ງຈະເຮັດໃຫ້ເຮົາສັງ ເກດຂໍ້ທີ່ກ່າວອ້າງຈາກພະຄຳພີເດີມ?

ກ. ________________________________________________

ຂ. ________________________________________________

**13** ໃຫ້ທ່ານເປີດເບິ່ງພະຄຳພີໃຫມ່ໃນຫນ້າທີ່ຫມາຍໄວ້ດ້ວຍຕົວ ດ ຄືຫນ້າທີ່ວ່າດ້ວຍ ຄຳອະທິບາຍ ເປັນຕົ້ນໃຫ້ທ່ານອ່ານ ເລື່ອງ "ຂໍ້ອ້າງ" ຂໍ້ອ້າງນັ້ນມີຢູ່ 2 ຢ່າງ ຄື: ຢ່າງຫນຶ່ງຢູ່ໃນວົງເລັບລຸ່ມຫົວຂໍ້ແລະອີກຢ່າງຫນຶ່ງຢູ່ລຸ່ມຫນ້າ. ທັງສອງຢ່າງນັ້ນເປັນປະໂຫຍດໃນການຮຽນດ້ວຍວິທີໃດ?

________________________________________________

**14** ທ່ານຮູ້ຢູ່ແລ້ວວ່າ ມທ 2:6 ເປັນຄຳກ່າວອ້າງຈາກພະຄຳພີມີກາ. ບັດນີ້ທ່ານໄດ້ຮຽນຮູ້ແລ້ວກ່ຽວກັບຂໍ້ອ້າງ ມທ 2:6 ຢູ່ຫນ້າ 3 ຂອງພະຄຳພີໃຫມ່ໃຕ້ເສັ້ນລຸ່ມຫນ້າ 3 ນັ້ນມີເລກດັ່ງຕໍ່ໄປນີ້:

---

1:23 ອຊຢ 7:14 1:25 ລູກາ 2:21 2:6 ມກ 5:2.

ຕອນສຸດທ້າຍທີ່ມີເລກ 5:2 ຫມາຍຄວາມວ່າ ບົດທີ 5:2 ອ້າງເຖິງ ມີເກ 5:2 (ຫນ້າ 1133 ໃນພະຄຳພີເດີມ) ໃຫ້ທ່ານກັບໄປເບິ່ງຂໍ້ອ້າງລຸ່ມຫນ້າ 3 ໃນພະຄຳພີໃຫມ່. ມັດທາຍ 1:23 ມີຂໍ້ອ້າງເຖິງພະຄຳພີເດີມ ອ້າງເຖິງບົດໃດ ຂໍ້ໃດ ໃນເອຊາຢາ? ________

ຕອບ:

**10** *ຄ.ຖືກ*

**11** *ມທ 2:6, 18 ແລະ 3:3*

**12** *ກ. ໃຊ້ວົງຢືມ ຂ. ຫຍໍ້ຫນ້າເຂົາ*

**13** *ວິທີປຽບທຽບ*

**14** *ເອຊາຢາ 7:14*

**15** ຕໍ່ໄປເຫັນໃນ ມທ 1:25 ຍັງມີອີກຂໍ້ອ້າງ ແຕ່ບໍ່ອ້າງເຖິງ ພະຄໍາພີເດີມ ອ້າງເຖິງຂໍ້ປຽບທຽບອີກຂໍ້ໜຶ່ງໃນ ພະຄໍາພີ ໃໝ່. ຂໍ້ອ້າງນັ້ນຂຶ້ນກັບຂໍ້ໃດໃນຂ່າວປະເສີດ ລູກາ? _____________

**16** ໃຫ້ທ່ານກັບໄປເບິ່ງໃນໜ້າ 2 ຂອງພະຄໍາພີໃໝ່ທີ່ມີຫົວຂໍ້ຂຽນເປັນຕົວໃຫຍ່ວ່າ:

**ພະກໍາເນີດຂອງພະເຢຊູຄຣິດ**

ເຫັນຂໍ້ອ້າງໃນວົງເລັບລຸ່ມຫົວຂໍ້ນັ້ນບໍ່? ຂໍ້ນັ້ນອ້າງເຖິງເຫດການດຽວ (ຄືພະກໍາເນີດຂອງພະເຢຊູຄຣິດ) ໃນຂ່າວປະ ເສີດອີກເຫຼັ້ມໜຶ່ງ. ອີກເຫຼັ້ມໜຶ່ງລາຍງານເລື່ອງພະກໍາເນີດບົດໃດຂໍ້ໃດ? ____________________________________________

**17** ໃຫ້ທ່ານເປີດເບິ່ງ ມັດທາຍ 2:18 ໃນໜ້າ 5 ນັ້ນໃຫ້ທ່ານເບິ່ງຂໍ້ອ້າງອີກ. ຄໍາກ່າວອ້າງອີງໃສ່ ມທ 2:18 ມາ ຈາກໃສໃນພະຄໍາພີເດີມ? (ຖ້າທ່ານບໍ່ເຂົ້າໃຈຕົວຫຍໍ້ ຢລຢ ໃຫ້ທ່ານກັບໄປເບິ່ງກ່ອນມັດທາຍໃນໜ້າ ບ ທີ່ມີຊື່ຕົວ ຫຍໍ້ຂອງພະຄໍາພີເດີມ) _____________________

**18** ຄໍາທໍານວາຍຂອງ ເຢເລມີຢາ ສໍາເລັດໃນເວລາທີ່ເຮໂລດຜູ້ _______________ ສັ່ງໃຫ້ຂ້າ _______________ ໃນບ້ານເບດ _______________ (ຕື່ມຄວາມທີ່ຂາດ)

**19** ຕອນນັ້ນຈາກພະທໍາ ເຢເລມີຢາ 31:15 ເຫັນເຂົາເອົາມາກ່າວອ້າງອີກໃນມັດທາຍບົດໃດ ຂໍ້ໃດ? ____________________________________________

**20** ໃຫ້ທ່ານເບິ່ງ ມທ 4:15-16 ອີກແລ້ວເບິ່ງຂໍ້ອ້າງລຸ່ມໜ້າ 9 ນັ້ນ. ດັ່ງນັ້ນ ມັດທາຍ 4:15-16 ໄດ້ຖືກຍົກມາ ຈາກໃສໃນພະຄໍາພີເດີມ? _______________________________

**21** ໃຫ້ພວກເຮົາຮຽນຄືນອີກກ່ຽວກັບຄໍາທໍານວາຍ 5 ປະການທີ່ໄດ້ຮຽນມາແລ້ວຄື:
ອຊຢ 7:14, ອຊຢ 9:1-2, ອຊຢ 40:3, ຢລຢ 31:15, ມີກາ 5:2
ໃຫ້ເລືອກຂໍ້ພະຄໍາພີເຫຼົ່ານີ້ໃສ່ໃຫ້ຖືກກັບຕອນພະຄໍາພີທີ່ມີຢູ່ຂ້າງລຸ່ມນີ້:
ກ. ພະກໍາເນີດໃນເບດເລເຮັມ ___________ ຂ. ເກີດຈາກຍິງພົມມະຈາລີ ___________
ຄ. ເຮໂລດຂ້າເດັກນ້ອຍຜູ້ຊາຍ __________ ງ. ຜູ້ປະກາດກ່ອນໜ້າພະອົງ ________
ຈ. ການປ່າວປະກາດໃນແຂວງຄາລີເລ ___________________________________

ຕອບ:

***15*** *ລູກາ 2:21*

***16*** *ລູກາ 2:1-7*

***17*** *ຢລຢ 31:15*

***18*** *ຜູ້ຍິ່ງໃຫຍ່....ເດັກນ້ອຍຜູ້ຊາຍ....ເບດເລເຮັມ*

***19*** *ມທ 2:18*

***20*** *ອຊຢ 9:1-2*

***21*** *ກ. ມີກາ 5:2 ຂ. ອຊຢ 7:14 ຄ. ຢລຢ 31:15 ງ. ອຊຢ 40:3 ຈ. ອຊຢ 9:1-2*

**22** ໃນຂ້າງຊ້າຍມີຂໍ້ຄວາມ ຄຳທຳນວາຍຈາກພະຄຳພີເດີມ ໃນວ່າງກາງໃຫ້ທ່ານຕື່ມຄວາມທີ່ຂາດໃສ່ໃນຫົວຂໍ້ນັ້ນ ແລ້ວໃນ ຂ້າງຂວາໃຫ້ທ່ານຂຽນຂໍ້ພະຄຳພີທີ່ສຳເລັດໃນ ມັດທາຍ (ໃຊ້ພະຄຳພີໄດ້ແຕ່ຢ່າກັບໄປເບິ່ງປື້ມຮຽນນີ້)

ກ. ຢລຢ 31:15 ກະສັດເຮໂລດຂ້າ __________________ ຈາກ ມທ ________

ຂ. ມກ 5:2 ພະກຳເນີດຢູ່ ______________________ ຈາກ ມທ ________

ຄ. ອຊຢ 9:1-2 ການປະກາດໃນແຂວງ _______________ ຈາກ ມທ ________

ງ. ອຊຢ 40:3 ຜູ້ _________________ ກ່ອນໜ້າພະອົງ ຈາກ ມທ ________

ຈ. ອຊຢ 7:14 ເກີດຈາກຍິງ ______________________ ຈາກ ມທ ________

**23** ໃຫ້ທ່ານສະເໜີຕອນພະຄຳພີເດີມ ທີ່ກ່າວເຖິງຄຳທຳນວາຍຕໍ່ໄປນີ້: (ໃຊ້ພະຄຳພີກໍໄດ້ ແຕ່ຢ່າກັບໄປເບິ່ງປື້ມຮຽນນີ້)

ກ. ເກີດຈາກຍິງພົມມະຈາລີ ______________________________________________

ຂ. ເກີດໃນບ້ານເບດເລເຮັມ ______________________________________________

ຄ. ເຮໂລດຂ້າເດັກນ້ອຍຜູ້ຊາຍ ____________________________________________

ງ. ຜູ້ປະກາດໄປກ່ອນໜ້າພະອົງ ___________________________________________

ຈ. ການປະກາດໃນແຂວງ ຄາລີເລ __________________________________________

**24** ໃຫ້ທ່ານເປີດເບິ່ງ ມທ ບົດ 21 ມີຄຳທຳນວາຍເລື່ອງພະເມຊີອາ 3 ປະການໃນບົດ 21 ນັ້ນ ໃຫ້ທ່ານຊອກຫາໂດຍ ໃຊ້ຂໍ້ອ້າງອີງ. (ໃຫ້ຕື່ມຄວາມທີ່ຂາດ)

ກ. ຄຳທຳນວາຍອັນທຳອິດຢູ່ໃນ ມທ 21 ຂໍ້ໃດ? ______________________________

ຂ. ອ້າງເຖິງຂໍ້ໃດໃນພະຄຳພີເດີມ? (ເອົາແຕ່ຂໍ້ທຳອິດຂໍ້ດຽວກ່ອນ) _________________

ຄ. ຫົວເລື່ອງຄຳທຳນວາຍນີ້ຄືການຂີ່ໂຕ _________ ສະເດັດເຂົ້າໄປໃນກຸງ ____________

**25** ມັດທາຍ ບົດ 21 ອ້າງເຖິງຄຳທຳນວາຍປະການທີສອງ ທີ່ວ່າດ້ວຍເດັກນ້ອຍສັນລະເສີນພະອົງ.

ກ. ຄຳທຳນວາຍນັ້ນເຫັນໃນ ມທ ບົດ 21 ຂໍ້ໃດ? ______________________________

ຂ. ອ້າງເຖິງຄຳທຳນວາຍໃດໃນພະຄຳພີເດີມ? (ຢ່າລືມເບິ່ງຂໍ້ອ້າງລຸ່ມໜ້າ 73) _________

ຕອບ:

**22** *ກ. ເດັກນ້ອຍຜູ້ຊາຍ ມທ 2:18* *ຂ. ເບດເລເຮັມ ມທ 2:6*
*ຄ. ຄາລີເລ ມທ 4:15-16ກາ 5:2* *ງ. ປະກາດ ມທ 3:3*
*ຈ. ພົມມະຈາລີ ມທ 1:23* *ຈ. ອຊຢ 9:1-2*

**23** *ກ. ອຊຢ 7:14* *ຂ. ມກ 5:2*
*ຄ. ຢລຢ 31:15* *ງ. ອຊຢ 40:3*
*ຈ. ອຊຢ 9:1-2*

**24** *ກ. ຂໍ້ 5* *ຂ. ຊຊຢ 9:9* *ຄ. ໂຕລໍ...ເຢລູຊາເລັມ*

**25** *ກ. ຂໍ້ 16* *ຂ. ພສສ 8:2*

**26** ເນື້ອຄວາມຂອງຄໍາທໍານວາຍປະການທີ 3 ໃນ ມັດທາຍ ບົດ 21 ກໍເວົ້າເລື່ອງພະອົງຈະຖືກປະຕິເສດຢ່າງດຽວກັນ ກັບຫີນທີ່ຊ່າງປະຕິເສດບໍ່ຮັບ.

ກ. ຂໍ້ນັ້ນຢູ່ໃນ ມັດທາຍ ບົດທີ 21 ຂໍ້ໃດ? ________________________________

ຂ. ອ້າງເຖິງຂໍ້ໃດໃນພະຄໍາພີເດີມ? ____________________________________

**27** ໃນ ມທ ບົດ 21 ອ້າງເຖິງຄໍາທໍານວາຍໃນພະຄໍາພີເດີມ 3 ຢ່າງຄື:

ພສສ 8:2 ພສສ 118:22-23 ຊຂຢ 9:9

ກ. ຄໍາທໍານວາຍໃດອ້າງເຖິງ ພະເຢຊູຂີ່ລໍ? ______________________________

ຂ. ຄໍາໃດອ້າງເຖິງເດັກສັນລະເສີນພະອົງ? ______________________________

ຄ. ຄໍາໃດອ້າງເຖິງຫີນທີ່ຊ່າງຖອດຖິ້ມ? ________________________________

> <u>ຈົ່ງສັງເກດ</u>: ຖ້າທ່ານໃຊ້ພະຄໍາພີພາສາລາວ ທີ່ ບໍ່ຄົບຖ້ວນ ທ່ານຈະບໍ່ພົບ ພສສ 118:22-23 ແລະ ຊຂຢ 9:9 ທໍາມະດາຖ້າຂາດບໍ່ມີຂໍ້ຫນຶ່ງຂໍ້ໃດທີ່ຕ້ອງການໃຊ້ໃນບົດຮຽນນີ້ ເຮົາຈະກ່າວອ້າງຂໍ້ ນັ້ນຈາກຄໍາແປສະບັບບູຮານ. ແຕ່ວ່າສອງຂໍ້ນີ້ຄື: ພສສ 118:22-23 ແລະ ຊຂຢ 9:9 ເຮົາ ບໍ່ຕ້ອງກ່າວອ້າງເພາະມັດທາຍກ່າວອ້າງໃນພະຄໍາພີໃຫມ່ແລ້ວເຮົາຈຶ່ງບໍ່ຕ້ອງກ່າວອ້າງອີກ.

**28** ໃນຂໍ້ຕໍ່ໄປນີ້ມີຂໍ້ຄໍາທໍານວາຍຈາກພະຄໍາພີເດີມ ໃຫ້ທ່ານຂຽນຫົວເລື່ອງໃນຊ່ອງວ່າງກາງແລະຂໍ້ທີ່ສໍາເລັດໃນ ມັດທາຍ ບົດ 21. (ໃຊ້ພະຄໍາພີກໍໄດ້ ແຕ່ຢ່າກັບໄປເບິ່ງບົດຮຽນນີ້)

| | ຫົວເລື່ອງ | ມທ ບົດ 21 ຂໍ້ໃດ? |
|---|---|---|
| ກ. ພສສ 118:22-23 | ____________________ | ________________ |
| ຂ. ຊຂຢ 9:9 | ____________________ | ________________ |
| ຄ. ພສສ 8:2 | ____________________ | ________________ |

**29** ໃຫ້ທ່ານຍົກບົດແລະຂໍ້ໃນພະຄໍາພີເດີມທີ່ອ້າງເຖິງເຫດການຕໍ່ໄປນີ້:
(ໃຊ້ພະຄໍາພີກໍໄດ້ແຕ່ຢ່າກັບໄປເບິ່ງບົດຮຽນນີ້)

ກ. ພະອົງຂີ່ລໍເຂົ້າກຸງເຢລູຊາເລັມ? ____________________________________

ຂ. ເດັກນ້ອຍສັນລະເສີນພະອົງ? _______________________________________

ຄ. ພະເຢຊູປຽບເຫມືອນຫີນທີ່ຊ່າງຖິ້ມແລ້ວ? ______________________________

ຕອບ:

**26** *ກ. ຂໍ້ 42 ຂ. ພສສ 118:22-23*

**27** *ກ. ຊຂຢ 9:9 ຂ. ພສສ 8:2 ຄ. ພສສ 118:22-23*

**28** *ກ. ຫີນທີ່ຊ່າງຖອກຖິ້ມ (ຫຼືຄໍາຄ້າຍຄືກັນກໍໄດ້) ຂໍ້ 42 ຂ. ພະອົງຂີ່ລໍ ຂໍ້ 5*
*ຄ. ເດັກນ້ອຍສັນລະເສີນພະອົງ ຂໍ້ 16*

**29** *ກ. ຊຂຢ 9:9 ຂ. ພສສ 8:2 ຄ. ພສສ 118:22-23*

ຝຶກ: ໃຫ້ທ່ານເອົາສໍສີແດງຂຽນຄຳ "ສຳເລັດ" ໃສ່ພະຄຳພີຂ້າງ ມທ 21:5, ມທ 21:16 ແລະ ມທ 21:42 ແລ້ວໃຫ້ທ່ານຂີດກ້ອງ ພສສ 8:2 ແລະຖ້າມີພະຄຳພີເດີມທີ່ຄົບຖ້ວນ ພສສ 118:22-23 ແລະ ຊຂຢ 9:9 ດ້ວຍສໍສີແດງເຫມືອນກັນ.

**30** ໃຫ້ອ່ານເລື່ອງທີ່ມີຢູ່ທາງຊ້າຍມື ແລະເບິ່ງວ່າຖືກກັບຂໍ້ພະຄຳພີທີ່ມີຢູ່ຂ້າງຂວາແລ້ວເອົາຫົວຂໍ້ມາຈັບຄູ່ໃຫ້ຖືກ.

| | |
|---|---|
| _______ 1. ເກີດຈາກຍິງພົມມະຈາລີ | ກ. ພສສ 8:2 |
| _______ 2. ເກີດໃນບ້ານເບດເລເຮັມ | ຂ. ພສສ 118:22-23 |
| _______ 3. ເຮໂລດສັ່ງຂ້າເດັກນ້ອຍຜູ້ຊາຍ | ຄ. ອຊຢ 7:14 |
| _______ 4. ຜູ້ປະກາດໄປກ່ອນຫນ້າພະອົງ | ງ. ອຊຢ 9:1-2 |
| _______ 5. ພະອົງປ່າວປະກາດໃນແຂວງຄາລີເລ | ຈ. ອຊຢ 40:3 |
| _______ 6. ພະອົງຂີ່ລໍເຂົ້າກຸງເຢລູຊາເລັມ | ສ. ຢລຢ 31:15 |
| _______ 7. ເດັກນ້ອຍສັນເສີນພະອົງ | ຊ. ມກ 5:2 |
| _______ 8. ພະອົງປຽບເຫມືອນຫີນທີ່ຊ່າງຖິ້ມ | ຍ. ຊຂຢ 9:9 |

**31** ມີຄຳທຳນວາຍກ່ຽວກັບພະເມຊີອາ ທີ່ສຳເລັດໃນອາທິດສຸດທ້າຍກ່ອນພະເຢຊູຕາຍທີ່ໄມ້ກາງແຂນ. ຄຳທຳນວາຍບາງ ປະການນັ້ນບໍ່ຍາວຈັກດີ້ ເພາະເຫດນັ້ນເຖິງຈະເປັນຄຳກ່າວອ້າງຈາກພະຄຳພີເດີມກໍຕາມ ຜູ້ພິມພະຄຳພີບໍ່ໄດ້ຫຍໍ້ຫນ້າ ເຂົ້າໄປ. ໃຫ້ເຮົາຊອກຫາຄຳເຫຼົ່ານັ້ນມາພ້ອມດ້ວຍຂໍ້ອ້າງອີງ.

ກ. ມທ 26:31 ມີຄຳກ່າວອ້າງຈາກຜູ້ທຳນວາຍໃດ? (ຈົ່ງເບິ່ງຂໍ້ອ້າງອີງທີ່ຢູ່ລຸ່ມຫນ້າ) _________________ ທ່ານຈະສະຫລຸບຄວາມກ່າວອ້າງຈາກ ຊຂຢ ນັ້ນວ່າ "ເຮົາຈະປະຫານຜູ້ລ້ຽງແກະແລະຝູງແກະນັ້ນຈະແຕກຊະກັນ ໄປ". ຄວາມນັ້ນເວົ້າເຖິງພະເມຊີອາ ຊຶ່ງຢູ່ໃນຕຳແຫນ່ງໃດ? ___________________________________________________

ຂ. ມທ 27:35 ເວົ້າເຖິງເຫດການຫນຶ່ງທີ່ມີຄຳທຳນວາຍຈາກພະຄຳພີເດີມບົດໃດ ຂໍ້ໃດ? _________________ ທ່ານຈະຫຍໍ້ເຫດການນັ້ນໂດຍໃຊ້ຫົວຂໍ້ໃດ? ______________

ຕອບ:

**30** *1. ຖືກກັບ ຄ. 2. ຖືກກັບ ຊ. 3. ຖືກກັບ ສ. 4. ຖືກກັບ ຈ.*
*5. " ງ. 6. " ຍ. 7. " ກ. 8. " ຂ.*

**31** *ກ. ຊຂຢ 13:7 ຜູ້ລ້ຽງແກະ ຂ. ພສສ 22:18 ເຂົາແບ່ງເສື້ອຜ້າຂອງພະອົງ*

**32** ເປັນຕາອັດສະຈັນໃຈແທ້ວ່າ ມີເຫດການຫຼາຍປະການທີ່ຜູ້ທຳນວາຍໄດ້ກ່າວມາກ່ອນຫຼາຍຮ້ອຍປີ. ຄຳທຳນວາຍເລື່ອງ ພະເມຊີອາ ເຫຼົ່ານັ້ນທີ່ສຳເລັດໃນການສະເດັດມາຂອງພະເຢຊູນັ້ນເປັນຫຼັກຖານວ່າພະຄຳພີບໍ່ແມ່ນຄວາມຂອງມະນຸດ ແຕ່ເປັນຄວາມຂອງ ____________ ຜູ້ຂຽນບັນທຶກພະຄຳພີມີຫຼາຍຄົນໃນຫຼາຍຍຸກແລະຫຼາຍສະຖານທີ່ ແຕ່ວ່າ ຍັງເວົ້າຄວາມດຽວກັນຕະຫຼອດທັງໝົດ. (ຕື່ມຄວາມທີ່ຂາດ)

**33** ໃນບົດຮຽນນີ້ເຮົາໄດ້ສຶກສາມາເລື່ອງຄຳທຳນວາຍທີ່ສຳເລັດມາແລ້ວໃນຂ່າວປະເສີດໃດເປັນຕົ້ນ? ____________________________________________________________

**34** ກ. ໃນຂ່າວປະເສີດທັງ 4 ເຫຼັ້ມ ແມ່ນແຕ່ຂ່າວປະເສີດມັດທາຍ ທີ່ກ່າວອ້າງຂໍ້ຄຳທຳນວາຍໃນພະຄຳພີເດີມຫຼາຍກວ່າ ໝູ່, ແມ່ນດ້ວຍການຍົກຄຳທຳນວາຍຈາກພະຄຳພີເດີມນັ້ນທີ່ມັດທາຍສະແດງຢ່າງແຈ້ງດີວ່າ ອົງພະເຢຊູຄຣິດ ເປັນພະເມຊີອາແທ້. ເນື້ອໃນໃຈຄວາມຂ່າວປະເສີດມັດທາຍເວົ້າເຖິງອານາຈັກໃດ? __________________________________

ຂ. ມັດທາຍ ຍົກຂໍ້ຄຳທຳນວາຍຈາກພະຄຳພີເດີມມາປຽບກັບເຫດການໃນຊີວິດຂອງພະເຢຊູ. ມັດທາຍຈຶ່ງສອນດ້ວຍ ວິທີໃດ? ______________________________________

**35** ເປັນຫຍັງມັດທາຍຈຶ່ງກ່າວອ້າງຈາກພະຄຳພີເດີມຫຼາຍປານນັ້ນ? __________________

________________________________________________________________

| ເພື່ອຈະປຶກສາຫາລືກັນໃນທີ່ປະຊຸມ: |
| --- |
| ຄົນຊາດຢິວໃນສະໄໝພະກຳເນີດຂອງພະເຢຊູ ຖືວ່າ ພສສ ບົດ 2 ເປັນຄຳທຳນວາຍເລື່ອງພະເມຊີອາຢ່າງສຳຄັນຫຼາຍ ໃຫ້ພວກທ່ານຍົກປຽບ ພສສ 2:7-12 ກັບ ມທ 3:17. ທ່ານເຫັນເງົາຈາກ ພສສ ບົດ 2 ໃນພະສຸລະສຽງຂອງພະເຈົ້າທີ່ມາຈາກຟ້າ ເວລາພະເຢຊູຮັບບັບຕິສະມາບໍ່? |

*ພະຄຳພີໝົດສິ້ນສຳຄັນເພາະເປັນທີ່ພະເຈົ້າບັນດົນໃຈຜູ້ຂຽນ ແລ້ວອ້າງເຖິງການສະເດັດມາຂອງພະເຢຊູທັງໝົດ. ພະເຈົ້າເປັນຜູ້ບັນດົນໃຈຜູ້ຂຽນພະຄຳພີເລີຍສຳເລັດໃນພະເຢຊູ ແລ້ວພະວິນຍານບໍລິສຸດເປັນຜູ້ນຳພາໃຫ້ເຮົາເຂົ້າ ໃຈໄດ້ແລະໃຫ້ເຮົາສາມາດປະຕິບັດຊີວິດຄຣິສຕຽນໄດ້.*

ຕອບ:

**32** *ພະເຈົາ*

**33** *ມັດທາຍ*

**34** *ກ. ສະຫວັນ ຂ. ປຽບທຽບ*

**35** *ເພື່ອມີຫຼັກຖານວ່າ ພະເຢຊູເປັນອັນດຽວກັນກັບ ພະເມຊີອາ. (ຄຳຄ້າຍຄືກໍໄດ້)*

ໃຫ້ ທ່ານກັບໄປເບິ່ງໜ້າປົກບົດນີ້ແລ້ວຂຽນຂໍ້ພະຄໍາພີທີ່ອ້າງເຖິງຄໍາທໍານວາຍ 8 ປະການນີ້ໃສ່ໃນບ່ອນວ່າງ :

1. ອຊຢ 7:14
2. ມີກາ 5:2
3. ຢລຢ 31:15
4. ອຊຢ 40:3
5. ອຊຢ 9:1-2
6. ຊຂຢ 9:9
7. ພສສ 8:2
8. ພສສ 118:22-23

*ຢ່າລືມເຮັດບົດເສັງເລີຍ!*